JDB
ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 111 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 17 JUL 2026

ມະຕິ
ກອງປະຊຸມຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໄໝ ວິສາມັນ, ຄັ້ງທີ I ປະຈຳປີ 2026

ກອງປະຊຸມຜູ້ຖືຮຸ້ນ ສະໄໝ ວິສາມັນ, ຄັ້ງທີ I ຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ປະຈຳປີ 2026 ເຊິ່ງຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ" ໄດ້ຈັດຂຶ້ນໃນເວລາ 14:00 ໂມງ ຂອງວັນສຸກ, ວັນທີ 17 ກໍລະກົດ 2026 ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 6, ທະນາຄານຮ່ວມພັດທະນາ ມະຫາຊົນ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກອງ ປະຊຸມຂອງ ທ່ານ ຄຳສິງ ສອນສິນມະວິງ, ສະມາຊິກສະພາບໍລິຫານ ທຄຮ (ທີ່ຖືກມອບສິດຈາກ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ) ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຮ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ: 54 ທ່ານ, ຜູ້ມອບສິດຈຳນວນ: 2 ທ່ານ, ລວມຈຳນວນຮຸ້ນ ທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 677,924,900 ຮຸ້ນ, ນັບທັງຈຳ ນວນຮຸ້ນທີ່ຖືກມອບສິດ 40,479,966 ຮຸ້ນ, ບັນລຸອັດຕາສ່ວນ 90.39% ຂອງຈຳນວນຮຸ້ນ ທຄຮ ທັງໝົດ ແລະ ຖືວ່າຄົບ ອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຮ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 72,075,100 ຮຸ້ນ ເທົ່າກັບ 9.61% ຂອງຈຳນວນຮຸ້ນ ທຄຮ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິ ດັ່ງນີ້:

ວາລະທີ 1: ຮັບຮອງເອົາ ບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2025

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ຮັບຮອງ ການປັບປຸງ ສະມາຊິກສະພາບໍລິຫານ ຊຸດໃໝ່, ເຊິ່ງປະກອບມີ:

1) ທ່ານ ສຸນທອນ ຈັນທະວົງ	ປະທານ ສະພາບໍລິຫານ;
2) ທ່ານ ຄຳສິງ ສອນສິນມະວິງ	ຮອງປະທານສະພາບໍລິຫານ;
3) ທ່ານ ຈັນທະພອນ ຈັນທະວົງ	ສະມາຊິກ ສະພາບໍລິຫານ;
4) ທ່ານ ນາງ ຄອນສະຫວັນ ວິຊາເທບ	ສະມາຊິກ ສະພາບໍລິຫານ;
5) ທ່ານ ບຸນຊຸ່ມ ສີສະຫວັດ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ);
6) ທ່ານ ປ.ອ ຈອມຄຳ ບຸບຜາລີວັນ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ);
7) ທ່ານ ສຸກສະຫວັນ ມະນີວັນ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ).

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 3 ຮັບຮອງ ການສິ້ນສຸດໜ້າທີ່ ຂອງສະມາຊິກສະພາຜູ້ບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ ປະກອບມີ:

1) ທ່ານ ວິໄລ ສີພະພອນ, ຕຳແໜ່ງ ປະທານສະພາບໍລິຫານ ຮັບອຸດໜູນບຳເນັດ;
2) ທ່ານ ນາງ ພອນສະໄຫມ ສຸຂະຜົນ, ຕຳແໜ່ງ ຮອງປະທານສະພາບໍລິຫານ ຮັບອຸດໜູນບຳເນັດ;

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

3) ທ່ານ ສາຄອນ ຍໍພັນໄຊ, ຕຳແໜ່ງ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ຄົບວາລະຕາມລະບຽບການ;
4) ທ່ານ ວິລັນເດດ ໄວຍະສິມສັກ, ຕຳແໜ່ງ ສະມາຊິກ ສະພາບໍລິຫານ ແລະ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ;
5) ທ່ານ ວິສຸດ ບົວສີສະອາດ, ຕຳແໜ່ງ ສະມາຊິກສະພາບໍລິຫານ ສັບຊ້ອນໄປຮັບໜ້າທີ່ໃໝ່;
6) ທ່ານ ຈັນຊະນະ ສິງຫາວົງ, ຕຳແໜ່ງ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ;
7) ທ່ານ ວິລະພົງ ພິຈິດ, ຕຳແໜ່ງ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 4 ຮັບຮອງ ການປັບປຸງ ຄະນະອຳນວຍການ ຊຸດໃໝ່, ເຊິ່ງປະກອບມີ:

1) ທ່ານ ນາງ ຄອນສະຫວັນ ວິຊາເທບ	ຜູ້ອຳນວຍການ;
2) ທ່ານ ນາງ ນິດຕາ ນາມມະວົງ	ຮອງຜູ້ອຳນວຍການ (ຄະນະເດີມ);
3) ທ່ານ ໄຊ ບຸລິມມະວົງ	ຮອງຜູ້ອຳນວຍການ (ຄະນະເດີມ);
4) ທ່ານ ສັງມາ ສິດທຳມະວົງ	ຮອງຜູ້ອຳນວຍການ;
5) ທ່ານ ຫຼ້າສອນໄຊ ຈັນທະວົງ	ຮອງຜູ້ອຳນວຍການ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 5 ຮັບຮອງເອົາ ການດັດແກ້ໃບທະບຽນວິສາຫະກິດ ແລະ ກິດລະບຽບພາຍໃນຂອງ ທຄຮ ຄື:
1) ມາດຕາ 9: ທຶນຈົດທະບຽນ
2) ມາດຕາ 11: ຮຸ້ນ
3) ມາດຕາ 14: ໂຄງປະກອບຂອງຜູ້ຖືຮຸ້ນ
4) ມາດຕາ 84: ຜົນສັກສິດ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 677,924,900 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ປະທານກອງປະຊຸມ

ຄຳສິງ ສອນສິນນະວົງ